AFSCME 3299

# ຄຳຖາມທີ່ຖືກຖາມເປັນປະຈຳ

## ກ່ຽວກັບການຢຸດວຽກປະທ້ວງ ໃນວັນທີ 1 ເມສາ

**ເປັນຫຍັງທີມເຈລະຈາຕໍ່ລອງ AFSCME 3299 ຂອງພວກເຮົາ ຈຶ່ງກຳລັງຮຽກຮ້ອງໃຫ້ມີ ການຢຸດວຽກປະທ້ວງເພື່ອເປັນນ້ຳໜຶ່ງໃຈດຽວກັນກັບ UPTE-CWA?**

AFSCME 3299 ໄດ້ເຈລະຈາໃຫ້ມີສັນຍາທີ່ເປັນທຳກັບ UC ຕັ້ງແຕ່ ເດືອນມັງກອນ 2024. ເປັນເວລາໜຶ່ງປີກວ່າ, ແທນທີ່ຈະໃຫ້ສັນຍາທີ່ເປັນທຳແກ່ພວກເຮົາ, UC ໄດ້ນຳໃຊ້ວິທີການເຈລະຈາຕໍ່ລອງທີ່ລະເມີດກົດໝາຍ ແລະ ທຸຈະລິດ ຢ່າງຕໍ່ເນື່ອງ. ພວກເຮົາບໍ່ໄດ້ຢູ່ລຳພັງ. ຜູ້ຊ່ຽວຊານດ້ານວິຊາການ, ການດູແລສຸຂະພາບ ແລະ ການວິໄຈ 20,000 ຄົນ ຂອງ UPTE-CWA 9119 ໄດ້ສະເໜີບັນຫາທີ່ຄ້າຍຄືກັນກັບ UC ແລະ ມະຫາວິທະຍາໄລໄດ້ຕອບກັບດ້ວຍຄວາມເສີຍເມີຍແບບດຽວກັນ. UPTE ໄດ້ຮຽກຮ້ອງໃຫ້ມີການຢຸດວຽກປະທ້ວງ ສຳລັບວັນທີ 1 ເມສາ ແລະ AFSCME ຈະເຂົ້າຮ່ວມໂດຍເປັນນ້ຳໜຶ່ງໃຈດຽວກັນ!

**ການຢຸດວຽກປະທ້ວງເກີດຂຶ້ນເມື່ອໃດ ແລະ ຢູ່ໃສ? ຂ້ອຍຄວນເຮັດແນວໃດ ຖ້າຂ້ອຍມີຕາລາງເວລາເຮັດວຽກໃນຜຽນກາງຄືນ ກ່ອນທີ່ຈະເລີ່ມການຢຸດວຽກປະທ້ວງ?**

ການຢຸດວຽກປະທ້ວງໜຶ່ງວັນ ເລີ່ມຕົ້ນໃນເວລາ 12:00 ເຊົ້າ (0:00) ນັບຕັ້ງແຕ່ ວັນອັງຄານ, ວັນທີ 1 ເມສາ ແລະ ສິ້ນສຸດໃນເວລາ 11:59 ແລງ ຂອງ ວັນທີ 1 ເມສາ. ທຸກຄົນທີ່ຢູ່ລະຫວ່າງຜຽນ ເມື່ອການຢຸດວຽກປະທ້ວງເລີ່ມຕົ້ນຂຶ້ນໃນເວລາ 12:00 ເຊົ້າ ຂອງ ວັນທີ 1 ເມສາ ຄວນສືບຕໍ່ເຮັດວຽກ ຈົນຮອດເວລາສິ້ນສຸດປົກກະຕິຂອງຜຽນນັ້ນ. ທຸກຄົນທີ່ຕ້ອງຮ່ວມປະທ້ວງ ແລະ ມີຕາລາງເວລາໃຫ້ເຮັດວຽກ ໃນຜຽນທີ່ເລີ່ມຕົ້ນກ່ອນເວລາ 12:00 ເຊົ້າ (0:00) ເລີ່ມຕັ້ງແຕ່ ວັນພຸດ, ວັນທີ 2 ເມສາ, ຄວນສືບຕໍ່ຢຸດວຽກປະທ້ວງຈົນຮອດເວລາສິ້ນສຸດຂອງຜຽນນັ້ນ ແລະ ບໍ່ລາຍງານເຮັດວຽກໃນລະຫວ່າງຜຽນ. ທ່ານຄວນລາຍງານຜຽນຮ່ວມປະທ້ວງຂອງທ່ານໃຫ້ທັນເວລາ ແລະ ເຊັນທັນທີ ເມື່ອທ່ານມາຮອດ.

**ຂ້ອຍຈຳເປັນຕ້ອງເຮັດຫຍັງໃນວັນຢຸດວຽກປະທ້ວງ? ຂ້ອຍຕ້ອງໂທແຈ້ງໃນແຕ່ລະວັນ ເພື່ອບອກຜູ້ຄຸມງານຂອງຂ້ອຍບໍ? ຂ້ອຍຕ້ອງໂທລາປ່ວຍບໍ? ຂ້ອຍຈຳເປັນຕ້ອງໃຊ້ເວລາວັນພັກຜ່ອນບໍ?**

ຜູ້ຢຸດວຽກປະທ້ວງບໍ່ຈຳເປັນຕ້ອງໂທແຈ້ງ ແລະ ບໍ່ຄວນໃຊ້ວັນລາພັກທີ່ໄດ້ຮັບຄ່າຈ້າງ ໃນຂະນະທີ່ຢຸດວຽກປະທ້ວງ. AFSCME ຈະສົ່ງແຈ້ງການໄປຫາ UC ກ່ອນທີ່ພວກເຮົາຈະຢຸດວຽກປະທ້ວງ ກ່ຽວກັບເວລາ ແລະ ຈຸດທີ່ຕັ້ງຂອງການຢຸດວຽກປະທ້ວງ, ສະນັ້ນ ຜູ້ຄຸມງານ ແລະ ຜູ້ຈັດການຮູ້ແລ້ວວ່າ ລູກຈ້າງທີ່ເປັນຕົວແທນຂອງ AFSCME ຈະຢຸດວຽກປະທ້ວງ.

**ແມ່ນຫຍັງຄືສິດຕາມກົດໝາຍຂອງຂ້ອຍທີ່ຈະຢຸດວຽກປະທ້ວງ ໃນຖານະລູກຈ້າງລາຍວັນ, ທົດລອງວຽກ ຫຼື ຈຳກັດຢູ່ UC?**

ຜູ້ເຮັດວຽກທຸກຄົນທີ່ຢູ່ໃນການຄຸ້ມຄອງຂອງ AFSCME ມີສິດຕາມກົດໝາຍທີ່ຈະຢຸດວຽກປະທ້ວງ, ບໍ່ວ່າຈະເປັນລູກຈ້າງລາຍວັນ, ຈຳກັດ ຫຼື ທົດລອງວຽກ. ພາຍໃຕ້ຂໍ້ຕົກລົງປັດຈຸບັນຂອງພວກເຮົາ, ຜູ້ເຮັດວຽກທີ່ຈຳກັດ, ລາຍວັນ ແລະ ທົດລອງວຽກສາມາດປະຖິ້ມດ້ວຍເຫດຜົນໃດໜຶ່ງ -- ຍົກເວັ້ນ ສຳລັບເຫດຜົນທີ່ຜິດກົດໝາຍ, ເຊັ່ນ: ການແກ້ແຄ້ນຍ້ອນການເຄື່ອນໄຫວຂອງສະຫະພັນ (ລວມເຖິງການຢຸດວຽກປະທ້ວງ). ການແກ້ແຄ້ນ ລູກຈ້າງທີ່ເປັນຕົວແທນຂອງສະຫະພັນ ຫຼື ບໍ່ແມ່ນຕຳແໜ່ງບໍລິຫານ ສຳລັບການເຂົ້າຮ່ວມໃນການຢຸດວຽກປະທ້ວງ, ລວມເຖິງຜູ້ເຮັດວຽກລາຍວັນ, ຜູ້ເຮັດວຽກທົດລອງວຽກ ຫຼື ລູກຈ້າງທີ່ຈຳກັດ ແມ່ນຜິດກົດໝາຍຢ່າງເດັດຂາດ. ການແກ້ແຄ້ນທີ່ຜິດກົດໝາຍລວມເຖິງ: ການຫຼຸດການແຕ່ງຕັ້ງ ຫຼື ຊົ່ວໂມງປົກກະຕິຂອງຄົນໃດໜຶ່ງ, ການປ່ຽນຕາຕະລາງ ແລະ ການລົງວິໄນໃດໜຶ່ງ. AFSCME ມີ ແລະ ຈະສືບຕໍ່ປ້ອງກັນຜູ້ເຮັດວຽກທີ່ຖືກແກ້ແຄ້ນ ເນື່ອງຈາກການເຂົ້າຮ່ວມໃນການຢຸດວຽກປະທ້ວງ ແລະ ການເຄື່ອນໄຫວຂອງສະຫະພັນທີ່ໄດ້ຮັບການຄຸ້ມຄອງຕາມກົດໝາຍ. ຖ້າສິ່ງນີ້ເກີດຂຶ້ນ, ກະລຸນາຕິດຕໍ່ຜູ້ນຳ MAT ຂອງເຈົ້າ ຫຼື ຜູ້ຈັດການໃນທັນທີ.

**ຂ້ອຍຄວນຕອບກັບແນວໃດ ຖ້າຜູ້ຄຸມງານຂອງຂ້ອຍຖາມຂ້ອຍວ່າ ຂ້ອຍຈະຢຸດວຽກປະທ້ວງ ຫຼື ຂ້ອຍຈະມາເຮັດວຽກໃນລະຫວ່າງການຢຸດວຽກປະທ້ວງ?**

ເຈົ້າບໍ່ຈໍາເປັນຕ້ອງຕອບຄໍາຖາມໃດໜຶ່ງກ່ຽວກັບການທີ່ເຈົ້າເຂົ້າຮ່ວມການຢຸດວຽກປະທ້ວງ. UC ອາດຖາມ, ແຕ່ບໍ່ມີສິດບັງຄັບໃຫ້ເຈົ້າຕອບຄໍາຖາມກ່ຽວກັບການທີ່ເຈົ້າເຂົ້າຮ່ວມການຢຸດວຽກປະທ້ວງ ຫຼື ການເຄື່ອນໄຫວອື່ນໆຂອງສະຫະພັນ ທີ່ໄດ້ຮັບການຄຸ້ມຄອງຕາມກົດໝາຍ. ເຈົ້າບໍ່ຄວນເຊັນຫຍັງຈາກຝ່າຍຈັດການ ບໍ່ວ່າເຈົ້າວາງແຜນທີ່ຈະເຮັດວຽກໃນລະຫວ່າງການຢຸດວຽກປະທ້ວງ ຫຼື ບໍ່. ຖ້າຜູ້ຄຸມງານຂອງເຈົ້າຖາມເຈົ້າກ່ຽວກັບການເຂົ້າຮ່ວມຂອງເຈົ້າ, ເຂົາເຈົ້າຕ້ອງແຈ້ງໃຫ້ເຈົ້າຮັບຊາບວ່າ ເຈົ້າບໍ່ຈໍາເປັນຕ້ອງຕອບຄໍາຖາມ ແລະ UC ຈະບໍ່ແກ້ແຄ້ນເຈົ້າ ສໍາລັບການທີ່ເຈົ້າເຂົ້າຮ່ວມການຢຸດວຽກປະທ້ວງ. ຖ້າເຂົາເຈົ້າບໍ່ແຈ້ງ, ກະລຸນາຕິດຕໍ່ຜູ້ນໍາ MAT ຂອງເຈົ້າໃນທັນທີ.

**ຂ້ອຍເປັນຫ່ວງຄົນເຈັບ ແລະ ນັກສຶກສາຂອງຂ້ອຍ. ເປັນຫຍັງ UC ຈຶ່ງບອກພວກເຮົາວ່າ ການຢຸດວຽກປະທ້ວງຂອງພວກເຮົາຈະທໍາຮ້າຍນັກສຶກສາ ແລະ ຄົນເຈັບ?**

UC ຈະເຮັດທຸກຢ່າງ ເພື່ອຫ້າມບໍ່ໃຫ້ພວກເຮົາຢຸດວຽກປະທ້ວງ ເຊິ່ງຈະສົ່ງຜົນກະທົບທາງການເງິນຕໍ່ UC. ສະຫະພັນຂອງພວກເຮົາໄດ້ເຮັດວຽກຢ່າງດຸໝັ່ນ ເພື່ອປົກປ້ອງຄົນເຈັບຂອງພວກເຮົາກ່ອນ ແລະ ລະຫວ່າງການຢຸດວຽກປະທ້ວງ.ພວກເຮົາໃຫ້ແຈ້ງການການຢຸດວຽກປະທ້ວງຂອງພວກເຮົາແກ່ UC ລ່ວງໜ້າ ເປັນເວລາຫຼາຍກວ່າ 10 ວັນ ແລະ ຈັດຕັ້ງ ຄະນະສະເພາະກິດປົກປ້ອງຄົນເຈັບ ເຊິ່ງຈະຊ່ວຍໃຫ້ UC ຈັດພະນັກງານເຂົ້າເຮັດວຽກໃນໂຮງໝໍ ໃນກໍລະນີທີ່ເກີດພາວະສຸກເສີນທີ່ແທ້ຈິງໃນລະຫວ່າງການຢຸດວຽກປະທ້ວງ.

**ຂ້ອຍຄວນເຮັດຫຍັງ ຖ້າຜູ້ຄຸມງານຂອງຂ້ອຍບອກຂ້ອຍວ່າ ຂ້ອຍຕ້ອງມາເຮັດວຽກ ໃນລະຫວ່າງການຢຸດວຽກປະທ້ວງ ແລະ/ຫຼື ສະແດງເອກະສານບາງຢ່າງຈາກສານ ທີ່ລະບຸວ່າຕ້ອງມາເຮັດວຽກ?**

ຕິດຕໍ່ຫາສະຫະພັນໃນທັນທີ. ກົນລະຍຸດການສ້າງຄວາມຢ້ານກົວທີ່ເປັນມາດຕະຖານຂອງ UC ແມ່ນເພື່ອຊັກຈູງໃຫ້ລູກຈ້າງບາງຄົນເຊື່ອວ່າເຂົາເຈົ້າ "ຈໍາເປັນ" ຕ້ອງເຮັດວຽກ. ໃນອະດີດ, AFSCME ໄດ້ເຮັດວຽກກັບ PERB ແລະ UC ເພື່ອຈະລະບຸລູກຈ້າງຈໍານວນຈໍາກັດ ທີ່ຕ້ອງເຮັດວຽກໃນລະຫວ່າງການຢຸດວຽກປະທ້ວງ ແລະ ກຽມພ້ອມຄົນອື່ນຖ້າຈໍາເປັນ ຜ່ານຄະນະສະເພາະກິດປົກປ້ອງຄົນເຈັບ. AFSCME ຈະມີລາຍຊື່ຄົນທີ່ຄວນໄປເຮັດວຽກ, ສະນັ້ນ ໃຫ້ກວດເບິ່ງກັບຜູ້ນໍາ MAT ຂອງເຈົ້າ ຫຼື ຜູ້ຈັດການ.

**ຈະເຮັດແນວໃດ ຖ້າຜູ້ຄຸມງານຂອງຂ້ອຍຂໍໃຫ້ຂ້ອຍເຮັດວຽກໃນຜຽນ ໃນລະຫວ່າງການຢຸດວຽກປະທ້ວງ ເຊິ່ງຂ້ອຍບໍ່ມີຕາຕະລາງເຮັດວຽກ?**

ຖ້າຜູ້ຄຸມງານຂອງເຈົ້າພະຍາຍາມໂທຫາໃຫ້ເຈົ້າໄປເຮັດວຽກໃນວັນທີທີ່ເຈົ້າບໍ່ມີຕາຕະລາງເຮັດວຽກ, ເຈົ້າຄວນບອກເຂົາເຈົ້າວ່າ "ຂ້ອຍບໍ່ຫວ່າງ. ຂ້ອຍຈະເຂົ້າຮ່ວມການຢຸດວຽກປະທ້ວງຂອງສະຫະພັນ". ເຈົ້າບໍ່ຈໍາເປັນຕ້ອງເຮັດວຽກໃນລະຫວ່າງວັນເຫຼົ່ານັ້ນ. ຖ້າ UC ເວົ້າວ່າ ເຈົ້າຈໍາເປັນຕ້ອງເຮັດວຽກ, ແລ້ວກະລຸນາເບິ່ງຄໍາຕອບສໍາລັບຄໍາຖາມຂ້າງເທິງໃນທັນທີ.

**ຂ້ອຍສະໜັບສະໜູນການປະທ້ວງ, ແຕ່ຂ້ອຍຈໍາເປັນຕ້ອງມາທີ່ຈຸດປະທ້ວງບໍ ເມື່ອຂ້ອຍບໍ່ມີຕາຕະລາງເຮັດວຽກ?**

ສະມາຊິກ AFSCME ທຸກຄົນ ມາທີ່ຈຸດປະທ້ວງ ບໍ່ວ່າເຈົ້າຈະມີຕາຕະລາງເຮັດວຽກໃນລະຫວ່າງການຢຸດວຽກປະທ້ວງ ຫຼື ບໍ່. UC ຕ້ອງເຫັນຄວາມເຂັ້ມແຂງຂອງພວກເຮົາທີ່ເປັນຈໍານວນ ແລະ ຄົນເຈັບ, ນັກສຶກສາ ແລະ ສື່ຈະສະໜັບສະໜູນພວກເຮົາຫຼາຍຂຶ້ນ ຖ້າພວກເຮົາຢູ່ຕໍ່ໜ້າໂຮງໝໍ ແລະ ວິທະຍາເຂດຂອງພວກເຮົາ. ການຊ່ວຍເຫຼືອການປະທ້ວງແມ່ນມີໃຫ້ແກ່ສະມາຊິກທີ່ຮ່ວມເຮັດໜ້າທີ່ປະທ້ວງຕາມທີ່ນັດກັ້ນໄວ້ ໃນລະຫວ່າງການຢຸດວຽກປະທ້ວງ.

**ຂ້ອຍເຮັດວຽກທາງໄກ, ຂ້ອຍຈະເຂົ້າຮ່ວມການປະທ້ວງໄດ້ແນວໃດ?**

ຈຸດປະທ້ວງທີ່ມີພະລັງຈະສະແດງໃຫ້ UC ເຫັນວ່າ ພວກເຮົາສາມັກຄີກັນ. ພວກເຮົາສົ່ງເສີມໃຫ້ສະມາຊິກທຸກຄົນມາທີ່ຈຸດປະທ້ວງ ຖ້າເຈົ້າສາມາດເຂົ້າຮ່ວມໃນຈຸດທີ່ຕັ້ງໃດໜຶ່ງ, ເຖິງແມ່ນວ່າເຈົ້າເຮັດວຽກທາງໄກເປັນປົກກະຕິ. ເຈົ້າບໍ່ຈໍາເປັນຕ້ອງແຈ້ງໃຫ້ຜູ້ຄຸມງານຂອງເຈົ້າຮັບຊາບ.

**ຂ້ອຍຈະໄດ້ຮັບເງິນຈາກສະຫະພັນ ສໍາລັບການຢຸດວຽກປະທ້ວງບໍ?**

ເມື່ອພວກເຮົາຢຸດວຽກປະທ້ວງເປັນສະຫະພັນ, ສະມາຊິກຂອງ AFSCME 3299 ຕ້ອງສະແດງຕົວຢູ່ກອງໜ້າປະທ້ວງທຸກວັນ ແລະ ບໍ່ໄປເຮັດວຽກຕະຫຼອດໄລຍະເວລາການຢຸດວຽກປະທ້ວງ. ການຮ່ວມຢຸດວຽກປະທ້ວງ ຄືການເສຍສະຫຼະ. ສະຫະພັນຂອງພວກເຮົາມີກອງທຶນທີ່ຈໍາກັດ ສໍາລັບອາຫານ ແລະ ການກະກຽມເພື່ອຢຸດວຽກປະທ້ວງ ແລະ ໃຫ້ການຊ່ວຍເຫຼືອສໍາລັບຄວາມຍາກລໍາບາກ ຂອງສະມາຊິກທີ່ຢຸດວຽກປະທ້ວງ. ໃນປັດຈຸບັນ, ເມື່ອການຢຸດວຽກປະທ້ວງແມ່ນເວລາ 2 ວັນ ຫຼື ດົນກວ່ານັ້ນ, ເງິນຊ່ວຍເຫຼືອ $100 ສໍາລັບການຢຸດວຽກປະທ້ວງແມ່ນຈະມອບໃຫ້ແກ່ສະມາຊິກແຕ່ລະຄົນ ທີ່ຮ່ວມເຮັດໜ້າທີ່ປະທ້ວງທີ່ກໍານົດໄວ້ ເປັນເວລາໜຶ່ງວັນເຕັມ ໃນລະຫວ່າງການຢຸດວຽກປະທ້ວງ. ສໍາລັບການຢຸດວຽກປະທ້ວງໜຶ່ງວັນເຕັມ ທີ່ກໍາລັງຈະມາຮອດ, ເງິນຊ່ວຍເຫຼືອການຢຸດວຽກປະທ້ວງແມ່ນຈະບໍ່ມີໃຫ້.

**ຖ້າຝ່າຍຈັດການຄົນໃດໜຶ່ງຈາກ UC ຖາມກ່ຽວກັບການທີ່ເຈົ້າເຂົ້າຮ່ວມການຢຸດວຽກປະທ້ວງ, ເຈົ້າບໍ່ຈໍາເປັນຕ້ອງຕອບ. ຜູ້ຄຸມງານຂອງເຈົ້າບໍ່ມີສິດບັງຄັບໃຫ້ເຈົ້າຕອບ. ເຈົ້າບໍ່ຄວນເຊັນຫຍັງຈາກຝ່າຍຈັດການ ບໍ່ວ່າເຈົ້າວາງແຜນທີ່ຈະເຮັດວຽກໃນລະຫວ່າງການຢຸດວຽກປະທ້ວງ ຫຼື ບໍ່. ໃຊ້ແບບຟອມນີ້ເພື່ອບັນທຶກກົນລະຍຸດໃດໜຶ່ງທີ່ UC ເຮັດຜິດກົດໝາຍ.**

**ສະແກນຂ້ອຍ:**

**ຕິດຕາມພວກເຮົາ** | @afscme3299 | @afscme_3299 | @afscme3299